**ສາທາລະນະ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ

ຫ້ອງວ່າການແຂວງ

ເລກທີ...1177.../ຫວຂ

ອຸດົມໄຊ, ວັນທີ...09.09.2025...

# ແຈ້ງການແນະນຳ ( ສະບັບປັບປຸງ )

**ເຖິງ:** ບັນດາພະແນກການ, ອົງການ, ບໍລິສັດ, ລັດວິສາຫະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ.

**ເລື່ອງ:** ການເຊົ່າສະໂມສອນຂອງແຂວງ ແລະ ຫ້ອງປະຊຸມຊັ້ນ III ຂອງຫ້ອງວ່າການແຂວງ.

- ອີງໃສ່ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0200/ກງ, ລົງວັນທີ 25/01/2023 ວ່າດ້ວຍ ກຳໜົດໝາຍ ການໃຊ້ຈ່າຍງົບປະມານ ບໍລິຫານຂອງລັດ.( ສະບັບປັບປຸງໃໝ່ )
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການແຂວງ ສະບັບເລກທີ 385/ອຊ, ລົງວັນທີ 05 ພຶດສະພາ 2021;
- ອີງຕາມ ການຄົ້ນຄວ້າເຫັນດີເປັນເອກະພາບ ຂອງຄະນະຫ້ອງວ່າການແຂວງ ໃນຄັ້ງວັນທີ 29/08/2025.

ເພື່ອເປັນການປົກປັກຮັກສາ ແລະ ບູລະນະຫ້ອງປະຊຸມລວມຂອງແຂວງໃຫ້ມີຄວາມຍືນຍົງທັງຮັບປະກັນການນຳໃຊ້ໄດ້ຕະຫຼອດເວລາ ສະນັ້ນ, ຕ້ອງໄດ້ປັບປຸງສ້ອມແປງລະບົບ ໄຟຟ້າ, ນ້ຳປະປາ, ການອະນາໄມ, ເວນຍາມ ແລະ ການຮັກສາວັດຖຸອຸປະກອນໃຫ້ນຳໃຊ້ໄດ້ຢ່າງຍາວນານພ້ອມທັງຮັບປະກັນຄວາມປອດໄພ.

ຫົວໜ້າຫ້ອງວ່າການແຂວງ ຂໍຖືເປັນກຽດແຈ້ງມາຍັງ ບັນດາພະແນກການ, ອົງການ, ບໍລິສັດ, ລັດວິສາຫະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊາບວ່າ ການຈັດກອງປະຊຸມຂອງພາກສ່ວນຕ່າງໆ ຈະໄດ້ຄິດໄລ່ຄ່າບໍລິການ ດັ່ງລຸ່ມນີ້:

1. **<u>ຫ້ອງວ່າການແຂວງກຳນົດຄ່າບໍລິການ.</u>**

❖ **ສຳລັບພາກລັດບໍລິຫານ**

- ຫ້ອງປະຊຸມສະໂມສອນແຂວງ (ກໍລະນີບໍ່ໃຊ້ຈໍ LED)2.500.000 ກີບ / ວັນ.
- ຫ້ອງປະຊຸມສະໂມສອນແຂວງ (ກໍລະນີໃຊ້ຈໍ LED) 3.000.000 ກີບ / ວັນ.
- ຫ້ອງປະຊຸມ ຊັ້ນ 03 ຫ້ອງວ່າການແຂວງ 1.500.000 ກີບ / ວັນ.
- ຫ້ອງປະຊຸມ ຊັ້ນ 02 ຫ້ອງວ່າການແຂວງ 800.000 ກີບ / ວັນ.

2. **ອັດຕາ ພະນັກງານຮັບໃຊ້ຫ້ອງປະຊຸມ:**

- ວັນເຮັດການປົກກະຕິໃຫ້ຄິດໄລ່ 100,000 ກີບ / ຄົນ / ວັນ.
- ວັນເສົາ - ອາທິດ ແລະ ວັນບຸນຕ່າງໆ ໃຫ້ຄິດໄລ່ 150,000 ກີບ / ຄົນ / ວັນ.

3. ປ້າຍຄຳຂວັນ, ດອກໄມ້ປະດັບ, ນ້ຳດື່ມ ແລະ ອາຫານຫວ່າງຕ່າງໆ ແມ່ນພາກສ່ວນທີ່ກ່ຽວຂ້ອງຮັບຜິດຊອບເອງ.

- ສ່ວນເອກະສານອື່ນໆ ທີ່ຫ້ອງວ່າການແຂວງທີ່ໄດ້ອອກກ່ອນ ແລະ ຂັດກັບແຈ້ງການແນະນຳສະບັບນີ້ລ້ວນແຕ່ຖືກລົບລ້າງ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ;

ດັ່ງນັ້ນ, ຫ້ອງວ່າການແຂວງ ຈຶ່ງແຈ້ງມາຍັງ ທຸກພາກສ່ວນ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມແຈ້ງການແນະນຳສະບັບນີ້ດ້ວຍ.

**ຫົວໜ້າຫ້ອງວ່າການແຂວງ**

ແຂວງອຸດົມໄຊ ຫ້ອງວ່າການ

ພີໄລທອງ ຈິດມະນີ

**<u>ບ່ອນສົ່ງ:</u>**

- ສຳນັກງານ, ອົງການ, ພະແນກການ ບ່ອນລະ 01 ສະບັບ
- ລັດວິສາຫະກິດ ບ່ອນລະ 01 ສະບັບ
- ສຳເນົາ 02 ສະບັບ